**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ

ເລກທີ 448/ທຫລ
ນະຄອນຫຼວງວຽງຈັນ, ວັນທີ 02 ມິຖຸນາ 2025

# ຂໍ້ຕົກລົງ
# ວ່າດ້ວຍທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ

- ອີງຕາມ ກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ (ສະບັບປັບປຸງ) ສະບັບເລກທີ 64/ສພຊ, ລົງວັນທີ 01 ກໍລະກົດ 2024;
- ອີງຕາມ ການຄົ້ນຄວ້າຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

## ຜູ້ວ່າການ ອອກຂໍ້ຕົກລົງ:

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ວາງອອກເພື່ອຜັນຂະຫຍາຍກົດໝາຍວ່າດ້ວຍການຕ້ານ ການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ ກ່ຽວກັບທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ.

**ມາດຕາ 2 ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ**

ທຸລະກຳເງິນສົດ ແມ່ນ ການໃຫ້ບໍລິການຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ໃຫ້ແກ່ລູກຄ້າຂອງຕົນ ດ້ວຍຮູບແບບເງິນສົດ ເປັນສະກຸນ ເງິນກີບ ຫຼື ເງິນຕາຕ່າງປະເທດ ເປັນຕົ້ນ ການ ຝາກ, ຖອນ, ໂອນ, ແລກປ່ຽນ ເງິນ ຫຼື ຫຼຽນແລກເງິນ, ຊື້ ຂາຍ ແຊັກ, ທຸລະກຳອື່ນທີ່ນຳໃຊ້ເງິນສົດ.

ທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ແມ່ນ ການດຳເນີນທຸລະກຳເງິນສົດ ທີ່ມີມູນຄ່າ ສາມຮ້ອຍລ້ານ (300,000,000) ກີບ ຫຼື ທຽບເທົ່າຂຶ້ນໄປ ຕໍ່ຄັ້ງ.

**ມາດຕາ 3 ການລາຍງານ**

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຕ້ອງລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້ ໃຫ້ສຳນັກງານຂໍ້ມູນຕ້ານການຟອກເງິນ ພາຍໃນວັນທີ ຫ້າ ຂອງແຕ່ລະເດືອນ. ກໍລະນີການລາຍງານຖືກວັນພັກລັດຖະການ ໃຫ້ລາຍງານໃນວັນລັດຖະການຖັດໄປ.

ການລາຍງານ ຕ້ອງປະຕິບັດຕາມແບບພິມ ທີ່ສຳນັກງານຂໍ້ມູນຕ້ານການຟອກເງິນກຳນົດ ດ້ວຍຮູບແບບເອເລັກໂຕຣນິກ ໂດຍນຳໃຊ້ ຊື່ ແລະ ລະຫັດຜ່ານ ທີ່ສຳນັກງານຂໍ້ມູນຕ້ານການຟອກເງິນສະໜອງໃຫ້ ຕາມການສະເໜີຂອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ຫຼື ໃນຮູບແບບເອກະສານ ກໍລະນີຈຳເປັນ.

**ມາດຕາ 4 ການຈັດຕັ້ງປະຕິບັດ**

ສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ອົງການຄຸ້ມຄອງຫົວໜ່ວຍທີ່ມີໜ້າທີ່ລາຍງານ ເປັນເຈົ້າການ ຕິດຕາມ ແລະ ກວດກາ ການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ຫົວໜ່ວຍທີ່ມີໜ້າທີ່ລາຍງານ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 5 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍການລາຍງານທຸລະກຳເງິນສົດ ທີ່ມີມູນຄ່າເກີນກຳນົດ ສະບັບເລກທີ 417/ທຫລ, ລົງວັນທີ 05 ມິຖຸນາ 2015.

ເຊັນແທນ **ຜູ້ອຳນວຍການ**

ຜູ້ອຳນວຍການ

**ອາລຸນ ບຸນຍົງ**